ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 030 9882809,ແຟັກ:(856-21)

ເລກທີ:...078.../ລອທ

ນະຄອນຫຼວງວຽງຈັນ, ...21.OCT.2022....

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 04 ປະຈຳປີ 2022

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດ ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາ ບໍລິຫານ ສະໄໝສາມັນ ຄັ້ງທີ 04 ປະຈຳປີ 2022 ຊຶ່ງຈັດຂຶ້ນໃນວັນທີ 21 ຕຸລາ 2022 ເວລາ 15:00 ໂມງ ໂດຍ ມີລາຍລະອຽດດັ່ງລຸ່ມນີ້:

1. ມະຕິເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານ ຄັ້ງທີ່ 03 ປະຈຳປີ 2022.
2. ມະຕິເຫັນດີຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ແລະ ບົດລາຍງານການເງິນຂອງບໍລິສັດ ສຳລັບໄຕມາດທີ 03 ປີ 2022.

ດັ່ງນັ້ນ, ຈຶ່ງແຈ້ງຍັງທ່ານເພື່ອຮັບຊາບ

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ຜູ້ອຳນວຍການໃຫຍ່

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ເສດ ພັດທະນະມາດ
Zait PATTANAMAS